# ການກຽມພ້ອມ ແລະ ຫຼຸດຜ່ອນຜົນກະທົບຈາກໄພນ້ຳຖ້ວມ ຕໍ່ກັບເດັກນ້ອຍ

## ບາງກິດຈະກຳທີ່ຜູ້ໃຫຍ່ ແລະ ເດັກນ້ອຍ ຄວນ ແລະ ບໍ່ຄວນເຮັດ



ແນະນຳ ແລະ ສອນເດັກນ້ອຍ ໃຫ້ຮູ້ນຳໃຊ້ອຸປະກອນຕ່າງໆ ເພື່ອຊ່ວຍຊີວິດໃນເວລານ້ຳຖ້ວມ



ສອນເດັກນ້ອຍລອຍນ້ຳໃຫ້ຖືກວິທີ ແລະ ໃຫ້ຮູ້ຈັກເອີ້ນຜູ້ໃຫຍ່ມາຊ່ວຍເວລາເຫັນຄົນຕົກນ້ຳ



ພໍ່ແມ່ຄວນໄປສົ່ງ ແລະ ໄປຮັບລູກກັບຈາກໂຮງຮຽນ,ໃນຂະນະທີ່ນັ່ງຢູ່ເຮືອນັ້ນ ຕ້ອງໃຫ້ເດັກນ້ອຍໃສ່ເສື້ອຊູຊີບ ຫຼືຕ້ອງມີອຸປະກອນຊູຊີບຕິດເຮືອໄປນຳຕະຫຼອດເວລາ



ເວລານ້ຳຖ້ວມຫ້າມເດັກນ້ອຍຫຼິ້ນຕາມລຳພັງຢູ່ແຄມນ້ຳ



ເດັກນ້ອຍບໍ່ຄວນໂດດນ້ຳເວລານ້ຳຖ້ວມ



ເວລານ້ຳຖ້ວມຫ້າມປ່ອຍເດັກນ້ອຍກັບເມືອເຮືອນຄົນດຽວ

ຈັດຕັ້ງປະຕິບັດໂດຍ:

adpc · MRC

ຮ່ວມມືໂດຍ:

LNMC · ອຊຸນສ

ສະໜັບສະໜູນໂດຍ:

gtz Partner for the Future Worldwide on behalf of: · Federal Ministry for Economic Cooperation and Development · UNDP · Australian Government AusAID · Save the Children

ໂທລະສັບ 021771399, email: phannaly@laotel.com

# ມາດຕະການຄວາມປອດໄພຈາກນ້ຳຖ້ວມ ໃນໂຮງຮຽນ



ສ້າງຄວາມເຂົ້າໃຈໃຫ້ນັກຮຽນກ່ຽວກັບຈຸດພິເສດຂອງພູມສັນຖານ, ເຂດປອດໄພໃນຊຸມຊົນ ແລະ ເສັ້ນທາງທີ່ຈະໄປເຖິງ.



ສອນນັກຮຽນກ່ຽວກັບມາດຕະການຄວາມປອດໄພໃນຊຸມຊົນຄວນເຮັດ ແລະ ບໍ່ຄວນເຮັດຫຍັງແດ່ ກ່ອນ, ເວລານ້ຳຖ້ວມ,ແລະ ພາຍຫຼັງ ໄພນ້ຳຖ້ວມ.



ປະກາດໃນຊຸມຊົນ ຫຼືໃນໂຮງຮຽນ ກ່ຽວກັບວັນປິດໂຮງຮຽນ ພາຍຫຼັງໄດ້ຮັບການເຕືອນໄພ ແລະ ເປີດໂຮງຮຽນໃໝ່ ຫຼັງນ້ຳຖ້ວມ ແລະ ປູກຈິດສຳນຶກໃນໂຮງຮຽນ.



ສ້າງໂຮງຮຽນໃຫ້ສູງ ຫວິດລະດັບນ້ຳຖ້ວມ ເພື່ອໃຊ້ເປັນສະຖານທີ່ປອດໄພ ໂດຍມີສິ່ງອຳນວຍຄວາມສະດວກໃຫ້ພຽງພໍ



ພາຍຫຼັງນ້ຳຖ້ວມຕ້ອງອະນາໄມເດີ່ນໂຮງຮຽນ ແລະ ຫ້ອງຮຽນ ໃຫ້ສະອາດ ເພື່ອຫຼີກເວັ້ນການຕິດເຊື້ອພະຍາດທີ່ມາກັບນ້ຳຖ້ວມ.



ປະເມີນຄວາມເສຍຫາຍຈາກໄພນ້ຳຖ້ວມ ແລະ ລາຍງານຕໍ່ ອົງການຈັດຕັ້ງທີ່ກ່ຽວຂ້ອງເພື່ອຂໍງົບປະມານໃນການສ້ອມແປງຄືນໃໝ່.


ຈັດຕັ້ງປະຕິບັດໂດຍ: adpc MRC

ຮ່ວມມືໂດຍ: LNMC ອຊນສ

gtz Partner for the Future. Worldwide. on behalf of: Federal Ministry for Economic Cooperation and Development

UNDP

Australian Government AusAID

Save the Children

021771399, email: phannaly@laotel.com

# ການຫຼຸດຜ່ອນຄວາມສ່ຽງຕໍ່ຄວາມເສຍຫາຍຈາກໄພນໍ້າຖ້ວມ ໃນລະດັບຄອບຄົວ

## ກ່ອນນໍ້າຖ້ວມ



ຕິດຕາມຂ່າວວິທະຍຸ, ໂທລະພາບ, ໜັງສືພິມ ແລະ ວາລະສານ ກ່ຽວກັບດິນຟ້າອາກາດ



ຍົກພື້ນເຮືອນ, ເລົ້າເຂົ້າ,ໂຮງຮຽນ ໃຫ້ສູງຂຶ້ນ ແລະ ສ້ອມແປງສິ່ງທີ່ມີຢູ່ແລ້ວໃຫ້ແໜ້ນໜາ ສາມາດຕ້ານທານກັບໄພນໍ້າຖ້ວມໄດ້



ສ້ອມແປງເຮືອ, ພາຫະນະຂົນສິ່ງອື່ນໆ ທີ່ສາມາດນໍາໃຊ້ໄດ້ໃນເວລານໍ້າຖ້ວມ



ກະກຽມນໍ້າກິນ ນໍ້າໃຊ້ ເພື່ອໃຫ້ສາມາດນໍາໃຊ້ໄດ້ເວລານໍ້າຖ້ວມ



ກະກຽມອຸປະກອນຊູຊີບ, ອາຫານ, ຢາ,ໄຟສາຍ, ຂອນໄມ້, ໄມ້ໄຜ່ ແລະ ເຄື່ອງໃຊ້ອື່ນໆ ທີ່ມີຄວາມຈໍາເປັນເວລານໍ້າຖ້ວມ



ຈັດຫາ ແລະ ສ້າງສະຖານທີ່ປອດໄພ ເພື່ອເປັນບ່ອນຢູ່ອາໄສ ຂອງຄົນ, ສັດ, ເກັບມ້ຽນພືດຜັກເຄື່ອງໃຊ້ ແລະ ອາຫານຕ່າງໆ


ຈັດຕັ້ງປະຕິບັດໂດຍ:

adpc MRC

ຮ່ວມມືໂດຍ:

LNMC ອຊບສ

ສະໜັບສະໜູນໂດຍ:

gtz Partner for the Future. Worldwide. on behalf of

Federal Ministry for Economic Cooperation and Development

UNDP

Australian Government AusAID

Save the Children

021771399, email: phanmaly@laotel.com

# ການຫຼຸດຜ່ອນຄວາມສ່ຽງຕໍ່ຄວາມເສຍຫາຍຈາກໄພນ້ຳຖ້ວມ ໃນລະດັບຄອບຄົວ

## ເວລານ້ຳຖ້ວມ



ເອົາເປົາຊາຍປ້ານກັນນ້ຳໄວ້ ບໍ່ໃຫ້ໄຫຼເຂົ້າໃນເຮືອນ



ຍົກຮ້ານຜັກປູກ ແລະ ສິ່ງທີ່ຈຳເປັນໄປໄວ້ບ່ອນສູງທີ່ກຽມໄວ້ແລ້ວ
ເພື່ອຄວາມສະດວກ ແລະ ສາມາດເກັບກິນໄດ້ທຸກເວລາ



ຕິດຕາມລະດັບຂອງນ້ຳຢູ່ຕະຫຼອດເວລາ ແລະ ມີເຮືອ
ປະຈຳເຮືອນໄວ້ເພື່ອແຮສຸກເສີນ



ເວລາປະສົບໄພນ້ຳຖ້ວມຄອນເອີ້ນພາກສ່ວນຕ່າງໆ
ມາຊ່ວຍເຫຼືອ



ເວລາສຸກເສີນຕ້ອງຍົກຍ້າຍປະຊາຊົນ, ສັດລ້ຽງ ແລະ ຊັບສິນບັດ
ທີ່ມີຄ່າຂອງຜູ້ທີ່ປະສົບໄພ ໄປຢູ່ສະຖານທີ່ປອດໄພ



ລະວັງງູ ແລະ ສັດທີ່ມີພິດອື່ນໆ


ຈັດຕັ້ງປະຕິບັດໂດຍ:

ຮ່ວມມືໂດຍ:

ສະໜັບສະໜູນໂດຍ:

Federal Ministry for Economic Cooperation and Development

Australian Government AusAID

Save the Children

# ການຫຼຸດຜ່ອນຄວາມສ່ຽງຕໍ່ຄວາມເສຍຫາຍຈາກໄພນ້ຳຖ້ວມ ໃນລະດັບຄອບຄົວ

## ພາຍຫຼັງນ້ຳຖ້ວມ



ອຳນາດການປົກຄອງປະເມີນຄວາມເສຍຫາຍຈາກໄພນ້ຳຖ້ວມ
ແລະ ຟື້ນຟູຈິດໃຈຂອງຜູ້ປະສົບໄພນ້ຳຖ້ວມ



ອະນາໄມສະຖານທີ່ພັກພາອາໄສໃຫ້ສະອາດ
ເພື່ອປ້ອງກັນພະຍາດທີ່ຈະຕາມມາ



ສ້ອມແປງເຮືອນຊານ, ຄູກັນນ້ຳ ແລະ ຖະໜົນ
ຫົນທາງທີ່ເປ່ເພຈາກໄພນ້ຳຖ້ວມ




ຈັດຕັ້ງກວດສຸຂະພາບໃຫ້ແກ່ຜູ້ປະສົບໄພ



ປູກພືດທົດແທນ ແລະ ຕົ້ນໄມ້ກິນໝາກ



ປູກຈິດສຳນຶກ ແລະ ສ້າງຄວາມອາດສາມາດໃຫ້ແກ່ປະຊາຊົນ
ເພື່ອກຽມພ້ອມຮັບມື ແລະ ຕອບໂຕ້ກັບໄພນ້ຳຖ້ວມໃນຕໍ່ໜ້າ

ຈັດຕັ້ງປະຕິບັດໂດຍ: adpc, MRC

ຮ່ວມມືໂດຍ: LNMC, ອຂບສ

ສະໜັບສະໜູນໂດຍ: gtz Partner for the Future. Worldwide. on behalf of: Federal Ministry for Economic Cooperation and Development; UNDP; Australian Government AusAID; Save the Children

021771399, email: phannaly@laotel.com